# ການລ້ຽງໝູຫລຸມຊີວະພາບ





## ໝູຫລຸມ

ການລ້ຽງໝູຫລຸມ ຫລື ໝູຊີວະພາບ ເປັນການລ້ຽງໝູທີ່ເນັ້ນປະຢັດຕົ້ນທຶນເປັນຫລັກ ໂດຍນຳໃຊ້ວັດສະດຸທີ່ມີໃນທ້ອງຖິ່ນ, ຫາງ່າຍ, ລາຄາຖືກ ແລະ ສິ່ງທີ່ເຫລືອຈາກຜົນຜະລິດກະສິກຳກັບມານຳໃຊ້ໃຫ້ເກີດປະໂຫຍດໄດ້ອີກ. ຜົນຕອບແທນຈາກການລ້ຽງໝູ ນອກຈາກຈະມີລາຍໄດ້ຈາກການຂາຍໝູແລ້ວ ຍັງໄດ້ປຸ໋ຍຊີວະພາບຈຳນວນຫລາຍໄວ້ຈຳໜ່າຍເປັນລາຍຮັບເສີມອີກທາງໜຶ່ງ.

## ຂໍ້ດີຂອງການລ້ຽງໝູຫລຸມ

1. ລົດຕົ້ນທຶນຄ່າອາຫານໃນການລ້ຽງ 50-70% ເນື່ອງຈາກເນັ້ນການໃຊ້ວັດຖຸດິບທີ່ມີໃນທ້ອງຖິ່ນ ແລະ ການໃຊ້ພືດຜັກນາໆ ຊະນິດມາເປັນອາຫານໝູ.
2. ບໍ່ຕ້ອງເຮັດຄວາມສະອາດພື້ນຄອກ ບໍ່ຕ້ອງມີຮ່ອງລະບາຍນ້ຳເສຍ.
3. ບໍ່ມີກິ່ນເໝັນ, ບໍ່ມີແມງວັນ ແລະ ບໍ່ທຳລາຍສິ່ງແວດລ້ອມໃນຊຸມຊົນ.
4. ບໍ່ຕ້ອງສັກຢາປ້ອງກັນພະຍາດໝູ (ວັກຊີນ).
5. ໄດ້ໝູທີ່ມີຄຸນນະພາບດີ ແລະ ປຸ໋ຍໝັກຢ່າງດີຈຳນວນຫລວງຫລາຍ.

## ວັດຖຸອຸປະກອນ

1. ໂຮງເຮືອນພ້ອມດ້ວຍຫລັງຄາ ຂະໜາດຄວາມກວ້າງ 3 ແມັດ x ຄວາມຍາວ 6 ແມັດ ປະກອບດ້ວຍຮາງນ້ຳ, ຮາງອາຫານ.
2. ວັດສະດຸຮອງພື້ນປະກອບດ້ວຍແກບ, ດິນແດງ, ຖ່ານ, ເກືອທະເລ, ຂີ້ສັດແຫ້ງ, ຫົວເຊື້ອຮາຂາວ (IMO2), ນ້ຳຈຸລິນຊີ.
3. ລູກໝູ (ໝູຢ່ານົມ) ຈຳນວນ 10-12 ໂຕ.

## ວິທີດຳເນີນງານ

1. ໃຊ້ດິນບລ໋ອກກໍ່ຕິດເສົາຮອບທຸກດ້ານ ສູງປະມານ 40 ຊມ. ຫລື 2 ກ້ອນດິນບລ໋ອກ ຫລື ໃຊ້ໄມ້ແທນດິນບລ໋ອກກໍ່ໄດ້.
2. ຂຸດຫລຸມຈາກລະດັບໜ້າດິນຫ່າງຈາກຝາດິນບລ໋ອກ 20 ຊມ. ເລິກ 50 ຊ.ມ.








3. ແບ່ງຄວາມເລິກຂອງຫລຸມອອກເປັນ 2 ສ່ວນໆ ລະ 45 ຊມ. ແລ້ວຮອງພື້ນຄອກດ້ວຍວັດສະດຸ ດັ່ງຕໍ່ໄປນີ້:




## ອາຫານໝູຫລຸມ

### ວິທີເຮັດອາຫານໝູຫລຸມ

1. ຕົ້ນກ້ວຍ ຫລື ພືດຜັກ ຕັດມຸ່ນໆ 50 ກລ. ນ້ຳຕານຊາຍແດງ 2 ກລ. ເກືອ 0.5 ກລ. ໝັກໄວ້ 7 ມື້ ຖ້າອາກາດຮ້ອນ 5 ມື້ (ສ່ວນທີ 1).
2. ວັດສະດຸປະສົມ ມີ: ດິນແດງ 8 ກລ, ຂີ້ສັດແຫ້ງ 8 ກລ, ຮຳອ່ອນ 26 ກລ, ກະດູກປົ່ນ 1.3 ກລ, ໃບກະຖິນແຫ້ງ 5 ກລ, ປາປົ່ນ 1.3 ກລ. (ສ່ວນທີ 2).
3. ເອົາສ່ວນທີ 1 ແລະ ສ່ວນທີ 2 ປະສົມເຂົ້າກັນເປັນອາຫານໝູຫລຸມ.



### ການໃຫ້ອາຫານໝູຫລຸມ

| ອາຍຸໝູ | ໃຫ້ອາຫານ / ໂຕ / ມື້ |
|---|---|
| ເດືອນທີ 1 | ອາຫານສຳເລັດຮູບໝູນ້ອຍ 0.5 - 1 ກລ. |
| ເດືອນທີ 2 | ອາຫານສຳເລັດຮູບໝູນ້ອຍ 1 ກລ. + ອາຫານໝູຫລຸມ 1 ກລ. |
| ເດືອນທີ 3 | ອາຫານໝູຫລຸມ 2.5 ກລ. |
| ເດືອນທີ 4 | ອາຫານໝູຫລຸມ 3 ກລ. |
| ເດືອນທີ 5 | ອາຫານໝູຫລຸມ 4 ກລ. |

### ການໃຫ້ນ້ຳໝູຫລຸມ

1. ປະສົມນ້ຳຈຸລິນຊີຢ່າງໃດຢ່າງໜຶ່ງ ໃນ 7 ຊະນິດ 2 ບ່ວງແກງຕໍ່ນ້ຳ 10 ລິດ ໃນຖັງນ້ຳ ຫລື ຮາງນ້ຳໝູ ສະລັບກັນໄປ.


ບໍລິສັດໄຟຟ້ານ້ຳເທີນ 2 ຈຳກັດ
ພະແນກສິ່ງແວດລ້ອມ ແລະ ສັງຄົມ
ໂຄງການລຸ່ມເຂື່ອນ ແລະ ເຮືອນຈັກ, ໜ່ວຍງານຟື້ນຟູຊີວິດການເປັນຢູ່
ມີນາ 2013